# ຫນັງສືແບບຢ່າງຈາກຫົວຫນ້າຫມວດໂຮງຮຽນ ຫາພໍ່ແມ່ນັກຮຽນ ກ່ຽວກັບການຮັກສາລະບຽບວິນັຍຂອງນັກຮຽນ

(Place on school letterhead)

ເຖິງພໍ່ແມ່/ຜູ້ປົກຄອງນັກຮຽນ:

ການຮັກສາລະບຽບວິນັຍຂອງນັກຮຽນນັ້ນແມ່ນສິ່ງສຳຄັນອັນນຶ່ງໃນການຮັກສາສະພາບແວດລ້ອມໃຫ້ມີຄວາມປອດພັຍສຳຫລັບນັກຮຽນ ແລະ ພະນັກງານ. ຂະນະທີ່ຄວາມຮັບຜິດຊອບຕໍ່ການກະທຳຂອງພວກນັກຮຽນນັ້ນມີຄວາມສຳຄັນນັ້ນ, ພ້ອມໆດຽວກັບຄວາມຮູ້ ແລະ ຄວາມເຂົ້າໃຈສິດທິການອຸທອນ ແລະ ລະບຽບການອຸທອນຂອງພວກນັກຮຽນ ແລະ ຄອບຄົວຂອງເຂົາເຈົ້ານັ້ນກໍມີຄວາມສຳຄັນເທົ່າໆກັນ. ການແຈ້ງນະໂຍບາຍ ແລະ ລະບຽບການຕ່າງໆຂອງໂຮງຮຽນ < *ຊື່ຂອງ ໂຮງຮຽນ* > ຈະສ້າງສະພາບແວດລ້ອມ ເພື່ອຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນ.

ແມ່ນເປົ້າຫມາຍຂອງພວກເຮົາທີ່ ເພື່ອໃຫ້ກົດລະບຽບ ແລະ ວິທີການຮັກສາລະບຽບວິນັຍ ຖືກນຳໃຊ້ຢ່າງສມ່ຳສເມີ, ຍຸຕິທັມ ແລະ ວ່ອງໄວທັນການ. ຈະເປັນປະໂຍດທີ່ສຸດທີ່ທ່ານຄວນຮູ້ວ່າ:

- ນາຍຄຣູຄາດຫມາຍຢາກໃຫ້ທ່ານທົບທວນເບິ່ງລະບຽບຕ່າງໆຂອງຫ້ອງຮຽນ ແລະ ເຕືອນນັກຮຽນກ່ຽວກັບຜົນສະທ້ອນທີ່ຕາມມາຕໍ່ການປະພຶດຂອງເຂົາເຈົ້າ.
- ນາຍຄຣູມີສິດທີ່ຈະສັ່ງນັກຮຽນຢຸດເຂົ້າໂຮງຮຽນຊົ່ວຄາວໃນວັນທີ່ເກີດເຫດການ ແລະ ໃນວັນຕໍ່ໄປ.
- ເມື່ອຍົກຍ້າຍນັກຮຽນອອກຈາກຫ້ອງຮຽນໃນສະພາບຕ່າງໆເຫລົ່ານີ້ ຕ້ອງໄດ້ລາຍງານໃຫ້ຫົວຫນ້າຫມວດໂຮງຮຽນ ແລະ ພໍ່ແມ່ນັກຮຽນຊາບ. ໃນສະພາບອັນນີ້ ນາຍຄຣູອາດຈະມອບບົດຮຽນໃຫ້ນັກຮຽນໄປເຮັດຢູ່ທີ່ບ້ານ.
- ໂດຍເຫດຜົນຕ່າງໆເຫລົ່ານີ້, ນັກຮຽນອາດຈະຖືກສັ່ງຢຸດຊົ່ວຄາວໂດຍການພິຈາຣະນາຂອງຫົວຫນ້າຫມວດໂຮງຮຽນ, ຫລື ຜູ້ທີ່ຖືກມອບຫມາຍຫນ້າທີ່ຈາກຫົວຫນ້າຫມວດໂຮງຮຽນ. ເຖິງວ່ານະໂຍບາຍບໍ່ໂຍະຍານນີ້ສຳຫລັບນັກຮຽນມັທຍົມ (ພາກກາງ, ມັທຍົມພາກຕົ້ນ ແລະ ມັທຍົມພາກປາຍ) ເທົ່ານັ້ນກໍຕາມ, ບາງຢ່າງນັ້ນຍັງໃຊ້ໄດ້ສຳຫລັບພວກນັກຮຽນປະຖົມ, ແລະ ຄວາມຜິດຮ້າຍແຮງບາງຢ່າງນັ້ນມີຜົນເຖິງຂັ້ນພິຈາຣະນາໄລ່ອອກໂຮງຮຽນຢູ່ສເມີ, ດັ່ງມີຢູ່ຂ້າງລຸ່ມນີ້.
- ຄວາມຜິດກ່ຽວຂ້ອງກັບອາວຸດປືນ, ການແນມີດ, ລູກຣະເບີດ, ການຈູ່ໂຈມທຳຮ້າຍ ແລະ/ຫລື ຕຸບຕີ ເພື່ອການເພດ, ແລະ ການຂາຍຢາເສບຕິດໃຫ້ໂທດທີ່ຫລວງຄວບຄຸມ ນັ້ນຈະມີຜົນສະທ້ອນເຖິງການພິຈາຣະນາໄລ່ອອກໂຮງຮຽນ. ການຜິດອື່ນໆທີ່ມີຢູ່ໃນກົດລະບຽບການສຶກສານັ້ນ ກໍອາດຈະມີສະທ້ອນເຖິງການພິຈາຣະນາໄລ່ອອກໂຮງຮຽນຄືກັນ. ດ້ວຍການສັບປ່ຽນໄດ້ນັ້ນ, ຫົວຫນ້າຫມວດໂຮງຮຽນອາດຈະເລືອກໃຊ້ຄະນະສອນຣະບຽບວິນັຍ ເພື່ອເຂົ້າແຊກຊ່ອຍແທນທີ່ຈະໄລ່ອອກໂຮງຮຽນ ສຳຫລັບການກະທຳຜິດບາງຢ່າງທີ່ບໍ່ໄດ້ນັ່ງໄວ້, ໃນການກະທຳຜິດທີ່ຮ້າຍແຮງຂອງພວກນັກຮຽນປະຖົມສຶກສາ.
- ສະພາສູນກາງສຶກສາ ອາດສາມາດໄລ່ນັກຮຽນອອກໂຮງຮຽນ ຫລັງຈາກຄະນະທົບທວນໄດ້ພິຈາຣະນາໄລ່ອອກໂຮງຮຽນແລ້ວ. ສະພາສຶກສາເທົ່ານັ້ນທີ່ອາດສາມາດໄລ່ນັກຮຽນອອກໂຮງຮຽນ.

ກະຣຸນາໃຊ້ເວລາລົມກັບເດັກຂອງທ່ານກ່ຽວກັບຄວາມຄາດຫມາຍຂອງໂຮງຮຽນສຳຫລັບການປະພຶດ ແລະ ຜົນສະທ້ອນໃນການປະພຶດທີ່ບໍ່ເຫມາະສົມ ແລະ ການປະພຶດທີ່ໃຊ້ບໍ່ໄດ້. ລາຍລະອຽດເພີ້ມເຕີມກ່ຽວກັບການສັ່ງຢຸດຊົ່ວຄາວ ແລະ ການໄລ່ອອກໂຮງຮຽນ, ຣວມທັງສິ່ງທີ່ສູນກາງສຶກສາພຍາຍາມຫລຸດຜ່ອນລົງນັ້ນ, ສາມາດອ່ານໄດ້ທີ່ http://sandi.net/depts/placement_appeal/discipline_policy/index.html. ຖ້າທ່ານມີຄຳຖາມເຈາະຈົງກ່ຽວກັບສິ່ງໃດສິ່ງນຶ່ງນັ້ນ, ຂໍໃຫ້ຕິດຕໍ່ມາຫາຂ້າພະເຈົ້າໂດຍກົງໂລດ.

ດ້ວຍຄວາມນັບຖືຢ່າງສູງ,

*<ຊື່ຫົວຫນ້າຫມວດໂຮງຮຽນ>*

*ພິມແຈກຢາຍໂດຍການຊ່ວຍເຫລືອຂອງມູນນິທິ Annie E. Casey Foundation*

*XK., 03-01-05, San Diego City Schools, Template Letter to Parents from Principal on Student Discipline--Lao Version*